**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຜນການ ແລະ ການລົງທຶນ

ສູນສະຖິຕິແຫ່ງຊາດ

ຫ້ອງການ

ເລກທີ 063 /ຫກ1.3

ນະຄອນຫຼວງວຽງຈັນ, ວັນທີ 31 ມີນາ 2025

## ໜັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາ

**ເຖິງ: ຫ້າງຮ້ານ, ວິສາຫະກິດທຸກພາກສ່ວນທີ່ກ່ຽວຂ້ອງ.**

I. **ຫ້ອງການ ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ** ຈະມີການດຳເນີນຈັດຊື້ອຸປະກອນຫ້ອງຝຶກອົບຮົມ: ຄອມພິວເຕີພົກພາ, ເຄື່ອງສາຍ, ຈໍຜ້າສາກ, ສາຍປັບ, ສາຍປັກສຽບ ເພື່ອຮັບໃຊ້ກະກຽມໃຫ້ແກ່ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໃສ ທົ່ວປະເທດ ຄັ້ງທີ V ປີ 2025.

II. ສູນສະຖິຕິແຫ່ງຊາດຂໍຮຽນເຊີນບໍລິສັດຂອງທ່ານທີ່ມີຄວາມສົນໃຈເຂົ້າຍື່ນຊອງ ປະມູນສຳລັບ ຄອມພິວເຕີພົກພາ, ເຄື່ອງສາຍ, ຈໍຜ້າສາກ, ສາຍປັບ, ສາຍປັກສຽບ ສຳລັບຮັບໃຊ້ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໃສທົ່ວປະເທດ ຄັ້ງທີ V ປີ 2025.

III. ການປະມູນນີ້ຈະດຳເນີນຕາມຂັ້ນຕອນການປະມູນສົມທຽບລາຄາທີ່ໄດ້ກຳນົດໄວ້ຢູ່ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017, ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019 ແລະ ຄຳແນະນຳເພີ້ມເຕີມສຳລັບມາດຕາ 23 ແລະ ມາດຕາ 31 ຂອງຄຳແນະນຳການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 1195/ກງ, ລົງວັນທທີ 24 ມິຖຸນາ 2019. ບໍລິສັດ ຫຼື ຫ້າງຮ້ານສົນໃຈເຊີນຕິດຕໍ່ເອົາຊອງປະມູນ ນັບແຕ່ວັນທີ 31 ມີນາ 2025 ເຖິງ ວັນທີ 29 ເມສາ 2025 ຕາມເວລາໂມງລັດຖະການ.

IV. ຊອງສະເໜີລາຄາຈະຕ້ອງສົ່ງກ່ອນ ເວລາ 15:00 ໂມງ ຂອງວັນທີ 29 ເມສາ 2025 ແລະ ຊອງປະມູນທຸກໆຊອງຈະເປີດຂາຍໃນລາຄາ 500,000 ກີບ/ຊ່ອງ ໄດ້ເປີດໃນເວລາ ເວລາ 15:00 ໂມງ ຂອງມື້ດຽວກັນ ໂດຍຊ່ອງໜ້າຄະນະກຳມະການປະມູນ ແລະ ຜູ້ທີ່ຍື່ນຊອງຕາງໜ້າບໍລິສັດທີ່ສົນໃຈຢາກເຂົ້າຮ່ວມ ທີ່ຫ້ອງປະຊຸມຊັ້ນ 03 ເບີ 311 ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ. ສະຖານທີ່ບ້ານດົງນາໂຊກເໜືອ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ. ເຊິ່ງລາຍລະອຽດແມ່ນຄັດຕິດມາພ້ອມນີ້.

**ຫົວໜ້າຫ້ອງການ**

ສູນສະຖິຕິແຫ່ງຊາດ ຫ້ອງການ

ພອງສະມຸດ ຄຳວານວົງສາ

**ຕິດຕໍ່ພົວພັນ:**

021 242022